# ແຈ້ງການ

## ການປະກອບເອກະສານຂໍໜັງສືຜ່ານແດນຂອງພົນລະເມືອງລາວ

ສະຖານເອກອັກຄະລັດຖະທູດ ແຫ່ງ ສປປ ລາວ ປະຈໍາຍີ່ປຸ່ນຂໍແຈ້ງມາຍັງ ພີ່ນ້ອງຊາວລາວທີ່ອາໄສຢູ່ປະເທດຍີ່ປຸ່ນ ກ່ຽວກັບຂັ້ນຕອນການກະກຽມເອກະສານ ເພື່ອປະກອບຂໍໜັງສືຜ່ານແດນຂອງພົນລະເມືອງລາວ ຢູ່ທີ່ສະຖານເອກອັກຄະລັດຖະທູດລາວ ທີ່ໂຕກຽວ, ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

1. ປະກອບຂໍ້ມູນໃສ່ໃບກົດສໍາພັນ ແລະ ໃບຄໍາຮ້ອງຂໍໜັງສືຜ່ານແດນໃຫ້ຄົບຖ້ວນ ແລະ ຈະແຈ້ງຕາມບ່ອນຫວ່າງທີ່ໄດ້ກໍານົດໄວ້.
2. ການຕິດຮູບໃສ່ໃບຄໍາຮ້ອງຂໍໜັງສືຜ່ານແດນ ຈະຕ້ອງເປັນຮູບຖ່າຍຕົວຈິງທີ່ໄດ້ມາດຕະຖານ, ບໍ່ປັບແຕ່ງເກີນຄວາມເປັນຈິງ ແລະ ຕ້ອງເປັນຮູບຖ່າຍບໍ່ເກີນ 03 ເດືອນ ຫາ 06 ເດືອນ ໂດຍສະເພາະຮູບຖ່າຍຂອງເດັກນ້ອຍ ຈະຕ້ອງເປັນຮູບຖ່າຍທີ່ນຸ່ງເຄື່ອງທໍາມະດາ ຫ້າມບໍ່ໃຫ້ຕັດຕໍ່ໃສ່ເສື້ອແວັດ.
3. ຕ້ອງໃສ່ລາຍເຊັນຂອງຜູ້ຖືໜັງສືຜ່ານແດນ, ກໍລະນີບໍ່ມີລາຍເຊັນ ຈະຕ້ອງຂຽນຊື່, ຖ້າບໍ່ສາມາດຂຽນຊື່ຕົນເອງໄດ້ ຈະຕ້ອງຈໍ້າໂປ້ມືໃສ່ໃບຄໍາຮ້ອງຂໍໜັງສືຜ່ານແດນ.
4. ເອກະສານຢັ້ງຢືນຂອງພົນລະເມືອງລາວທີ່ດໍາລົງຊີວິດຢູ່ຕ່າງປະເທດໃນແຕ່ລະກໍລະນີ ເຊັ່ນ: ບັດກົງສຸນ, ບັດພັກເຊົາ, ບັດອອກແຮງງານ, ບັດນັກສຶກສາ, ໃບແຕ່ງງານ ແລະ ອື່ນໆ.
5. ສໍາລັບເດັກທີ່ອາຍຸບໍ່ເຖິງ 18 ປີ ຕ້ອງມີສໍາເນົາໃບຢັ້ງຢືນການເກີດ, ໃບແຕ່ງງານພໍ່ແມ່ ແລະ ໜັງສືຜ່ານແດນຂອງພໍ່ແມ່, ກໍລະນີທີ່ເປັນລູກລ້ຽງ ຕ້ອງມີໃບຢັ້ງຢືນການເປັນລູກລ້ຽງ, ຖ້າເອກະສານເປັນພາສາຕ່າງປະເທດ ແມ່ນຕ້ອງໄດ້ແປເປັນພາສາລາວ ໂດຍມີກາປະທັບຢັ້ງຢືນຄວາມຖືກຕ້ອງ.

ດັ່ງນັ້ນ, ສະຖານເອກອັກຄະລັດຖະທູດແຫ່ງ ສປປ ລາວ ປະຈໍາຍີ່ປຸ່ນ ຈຶ່ງແຈ້ງມາຍັງພີ່ນ້ອງຊາວລາວ ເພື່ອຊາບ ແລະ ປະຕິບັດຕາມຂັ້ນຕອນຂ້າງເທິງດ້ວຍ.

ສະຖານເອກອັກຄະລັດຖະທູດ

ສະຖານເອກອັກຄະລັດຖະທູດ ແຫ່ງ ສປປ ລາວ

ໂຕກຽວ